ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----=====0000====-----

ກະຊວງອຸດສາຫະກຳ ແລະການຄ້າ

ເລກທີ . 1513. . ./ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ . 30 .JUL .2012

# ແຈ້ງການ

ເຖິງ: ທົ່ວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ ແລະ ນະຄອນຫຼວງໃນຂອບເຂດທົ່ວປະເທດ.

ເລື່ອງ: ໃຫ້ເປັນເຈົ້າການໃນການຕິດຕາມ, ກວດກາ ແລະ ແກ້ໄຂກ່ຽວກັບສະພາບການປັ່ນປ່ວນ, ກັກຕຸນ ແລະສອຍໂອກາດຂຶ້ນລາຄາສິນຄ້າໃນທ້ອງຕະຫຼາດ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 474/ນຍ, ລົງວັນທີ 18/11/2010. ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມ ຂໍ້ຕົກລົງເລກທີ1064/ອຄ.ຄພນ; ລົງວັນທີ 04/06/2012ວ່າດ້ວຍການກຳນົດລາຍການສິນຄ້າຄວບຄຸມລາຄາຂອງຂະແໜງອຸດສາຫະ ກຳ ແລະການຄ້າກ
- ອີງຕາມ ແຈ້ງການເລກທີ1029/ອຄ.ຄພນ; ລົງວັນທີ 02/06/2011 ການລາຍງານສະພາບລາຄາສິນຄ້າປະຈຳອາທິດ ແລະປະຈຳເດືອນ.
- ອີງຕາມ ການຊີ້ນຳຂອງທ່ານລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າຄັ້ງ ວັນທີ 16/07/2012 .

ເພື່ອຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ດ້ວຍການໃຫ້ຜູ້ບໍລິໂພກໄດ້ຮັບຄວາມເປັນທຳທາງດ້ານລາຄາ, ປະລິມານ, ຄຸນນະພາບ ແລະທັງເປັນການປະຕິບັດພາລະບົດບາດຂອງຂະແໜງການໃນວຽກງານຄຸ້ມຄອງລາຄາສິນຄ້າ, ໂດຍສະເພາະແມ່ນສິນຄ້າທີ່ມີຄວາມຈຳເປັນ ແລະມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນປະເພດສະບຽງອາຫານຫຼັກຈຳນວນນຶ່ງທີ່ລັດໄດ້ກຳນົດ ແລະຄວບຄຸມລາຄາ

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າອອກແຈ້ງການດັ່ງນີ້:

1- ໃຫ້ສືບຕໍ່ເປັນເຈົ້າການໃນການຕິດຕາມ, ກວດກາ ສະພາບລາຄາສິນຄ້າໃນທ້ອງຕະຫຼາດໂດຍສະເພາະປະເພດສະບຽງອາຫານ ແລະອື່ນໆທີ່ຈຳເປັນ ເພື່ອກຳໃຫ້ໄດ້ສາຍເຫດການເໜັງຕີງຂອງ

ລາຄາສິນຄ້ານັ້ນແມ່ນມາຈາກໃສ່? ຍ້ອນຫຍັງ ແລະຊອກ ມາດຕາການແກ້ໄຂໃຫ້ທັນກັບສະພາບການ, ແລະສິ່ງສຳຄັນແກ້ໄຂໃຫ້ໄດ້ການສວຍໂອກາດ ກັກຕຸນ ເພື່ອເກັງກຳໄລຂອງຜູ້ຄ້າມີກາງ ຫຼື ການແກງແຍງລາຄາ.

2- ການເກັບກຳສະພາບລາຄາໃນແຕ່ລະທ້ອງຖິ່ນໃຫ້ສາມາດສ່ອງແສງໄດ້ເຖິງສະພາບລາຄາຕົວຈິງໃນທ້ອງຕະຫຼາດ ໃຫ້ຫຼີກເວັ້ນການຄາດຂະເນ ຫຼື ເອົາຂໍ້ມູນເກົ່າມາລາຍງານ, ຊຶ່ງບໍ່ສອດຄ່ອງກັບສະພາບລາຄາຕົວຈິງໃນທ້ອງຕະຫຼາດຂອງທ້ອງຖິ່ນນັ້ນ.

3- ໃຫ້ສືບຕໍ່ຈັດຕັ້ງປະຕິບັດລະບົບການລາຍງານສະພາບລາຄາປະຈຳອາທິດ, ເດືອນໃຫ້ກະຊວງອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ) ຕາມທີ່ໄດ້ກຳນົດໃນແຈ້ງການເລກທີ 1029/ອຄ ຄພນ; ລົງວັນທີ 02/06/2011 ດ້ວຍຄວາມເປັນເຈົ້າການ ແລະດ້ວຍຄວາມຮັບຜິດຊອບສູງ.

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ

ກະຊວງອຸດສາຫະກຳ ແລະການຄ້າ
ລັດຖະມົນຕີ

ດຣ. ນາມ ວິຍະເກດ

ສຳເນົາສົ່ງ:

1- ຄະນະນຳກະຊວງອຄ 03 ສະບັບ " ເພື່ອລາຍງານ "

2- ຫ້ອງການເພື່ອຊາບ " ເພື່ອຊາບ "

3- ກົມການຄ້າພາຍໃນ " ເພື່ອຕິດຕາມ "